ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 70 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2008

# ມະຕິຕົກລົງ
# ຂອງຄະນະປະຈຳສະພາແຫ່ງຊາດ
# ວ່າດ້ວຍການຕີຄວາມໝາຍກົດໝາຍ

ອີງຕາມມາດຕາ56 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ກ່ຽວກັບການຕີຄວາມໝາຍ ແລະອະທິບາຍລັດຖະທຳມະນູນ ແລະກົດໝາຍຕ່າງໆ;

ອີງຕາມການສະເໜີຂອງອົງການຕ່າງໆທີ່ກ່ຽວຂ້ອງ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງຕົກລົງຕີຄວາມໝາຍຈຳນວນໜຶ່ງ ກ່ຽວກັບການສ້າງລັດຖະທຳມະນູນ ແລະກົດໝາຍຕ່າງໆ ດັ່ງນີ້:

1. <u>ເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ</u>

ລັດ ແຫ່ງ ສປປ ລາວ ເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອຜົນປະໂຫຍດຂອງປະຊາຊົນ. ດັ່ງນັ້ນປະຊາຊົນຈຶ່ງມີສິດເສລີພາບໃນດ້ານຕ່າງໆ ໃນນັ້ນແມ່ນ ສິດເສລີພາບໃນການເຊື່ອຖື ຫລື ບໍ່ເຊື່ອຖືສາສະໜາ ຊຶ່ງເປັນນະໂຍບາຍອັນຖືກຕ້ອງ ແລະສະເໝີຕົ້ນສະເໝີປາຍຂອງລັດເຮົາ ສະນັ້ນຈຶ່ງໄດ້ກຳນົດບັນຫາດັ່ງກ່າວໄວ້ໃນມາດຕາ 43 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ.

ເມື່ອມີສິດກໍຕ້ອງມີພັນທະ, ສິດ ແລະພັນທະເປັນຄູ່ມາດຕະເກນ, ບໍ່ມີສິດໃດທີ່ບໍ່ມີພັນທະ ແລະບໍ່ມີພັນທະໃດທີ່ບໍ່ມີສິດ:

- ມີສິດກໍເພື່ອຈຸດປະສົງປະສົງປະຕິບັດພັນທະ;
- ມີພັນທະກໍຕ້ອງມີສິດເພື່ອປະຕິບັດພັນທະໃຫ້ສຳເລັດ.

ອີງຕາມມາດຕາ 43 ຂອງລັດຖະທຳມະນູນ ເສລີພາບໃນການເຊື່ອຖືສາສະໜາ ຫຼື ບໍ່ເຊື່ອຖືສາສະໜາ ໝາຍຄວາມວ່າປະຊາຊົນຈະເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາໃດ ກໍໄດ້ ໂດຍບໍ່ໃຫ້ມີການຊີ້ຈ້າງຈອບອອຍ, ຕົວະຍົວະ ລອກລວງໃຫ້ມາເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາໃດໜຶ່ງ ລວມທັງບໍ່ໃຫ້ມີການບັງຄັບໃຫ້ເຊື່ອຖືສາສະໜາດັ່ງກ່າວຫຼອດໄປ, ສາສະນິກາຊົນໃດ ໜຶ່ງຢາກຢຸດເຊົາການເຊື່ອຖືຍາມໃດກໍໄດ້.

ການຈັດຕັ້ງຂອງສາສະໜາຕ່າງໆ ຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດ ແລະ ຕ້ອງເຄື່ອນໄຫວຢູ່ໃຕ້ກົດໝາຍ

ພຣະສົງສາມະເນນ ແລະນັກບວດຂອງສາສະໜາອື່ນມີໜ້າທີ່ສຶກສາອົບຮົມ ກ່ຽວກັບຄຳສັ່ງສອນຂອງສາສະໜາໃຫ້ປະຊາຊົນເປັນຄົນດີເປັນຜູ້ດຸໝັ່ນພາກພຽນ, ປະຢັດສ້າງ ເພື່ອປະກອບສ່ວນໃນການປົກປັກຮັກສາແລະພັດທະນາປະເທດຊາດ.

ທຸກສາສະໜາທີ່ລັດຮັບຮູ້ລ້ວນແຕ່ມີສິດສະເໝີພາບຕໍ່ໜ້າກົດໝາຍ, ຫ້າມທຸກການກະທຳທີ່ເປັນການແບ່ງແຍກສາສະໜາ ແລະແບ່ງແຍກປະຊາຊົນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 9 ຂອງລັດຖະທຳມະນູນ.

ອີງຕາມມາດຕາ 9 ຂອງລັດຖະທຳມະນູນ ລັດເຄົາລົບ ແລະປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະນິກາຊົນ ແລະສາສະນິກະຊົນອື່ນ. ປຸກລະດົມສົ່ງເສີມພະພິຊຸສາມະເນນ ແລະນັກບວດຂອງສາສະໜາອື່ນໃຫ້ເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະປະຊາຊົນ. ຫ້າມທຸກການກະທຳທີ່ເປັນການແບ່ງແຍກສາສະໜາ, ແບ່ງແຍກປະຊາຊົນ ໝາຍຄວາມວ່າການເຄື່ອນໄຫວທາງດ້ານສາສະໜາຂອງພະພິຊຸສາມະເນນ, ນັກບວດຂອງສາສະໜາອື່ນ, ການເຊື່ອຖືຂອງພຸດທະສາສະນິກາຊົນ ແລະສາສະນິກະຊົນອື່ນ ແມ່ນໄດ້ຮັບອະນຸຍາດ ແລະປົກປ້ອງຈາກລັດ ແຕ່ໃຫ້ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ແລະນິຕິກຳອື່ນທີ່ກ່ຽວຂ້ອງຄື ບໍ່ໃຫ້ແຕະຕ້ອງເຖິງຄວາມໝັ້ນຄົງ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະຄວາມສາມະຄີພາຍໃນຊາດ ເຊັ່ນ ການເຄື່ອນໄຫວທາງດ້ານສາສະໜາຕ້ອງ:

1. ໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດໜ້າທີ່ກ່ຽວຂ້ອງ;
2. ບໍ່ໃຫ້ເປັນການແບ່ງແຍກຄວາມສາມະຄີລະຫວ່າງພັກ, ລັດ, ກອງທັບ ກັບປະຊາຊົນ;
3. ບໍ່ໃຫ້ສ້າງຄວາມຂັດແຍ່ງຂຶ້ນໃນໝູ່ປະຊາຊົນ, ຊັ້ນຄົນ, ເຜົ່າຕ່າງໆ ຫຼື ສາສະໜາດ້ວຍກັນ;
4. ບໍ່ໃຫ້ເປັນການໃສ່ຮ້າຍປ້າຍສີການຈັດຕັ້ງ ຫຼື ບຸກຄົນອື່ນ;
5. ບໍ່ໃຫ້ມີການຊື້ຈ້າງຈອບອອຍ, ຕົວະຍົວຫຼອກລວງ ເພື່ອໃຫ້ຜູ້ອື່ນມາເຂົ້າຮ່ວມສາສະໜານຳຕົນ;
6. ບໍ່ໃຫ້ເປັນການສະກັດກັ້ນ ຫຼື ຂັດຂວາງ ການບໍລິຫານປົກຄອງບ້ານເມືອງຂອງລັດ, ການປົກປັກຮັກສາ ແລະການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;
7. ບໍ່ໃຫ້ສ້າງສາສະໜາສະຖານ ໂດຍບໍ່ໄດ້ຮັບອະນຸຍາດ;
8. ບໍ່ໃຫ້ຈຳກັດສິດ ແລະພັນທະຂອງສາສະນິກາຊົນເປັນຕົ້ນ: ການສ້າງຄອບຄົວກັບສາສະນິກາຊົນອື່ນ, ການອອກແຮງງານລວມໝູ່, ການເປັນທະຫານພັນທະ ແລະອື່ນໆ;
9. ມີການເຄື່ອນໄຫວອື່ນທີ່ເປັນການກະທຳຜິດທາງອາຍາ ຫຼື ການລະເມີດກົດໝາຍອື່ນ.

## II. <u>ເສລີພາບໃນການຕັ້ງພູມລຳເນົາ</u>

ອີງຕາມມາດຕາ 40 ຂອງລັດຖະທຳມະນູນ ພົນລະເມືອງລາວມີສິດເສລີພາບ ໃນການຕັ້ງພູມລຳເນົາ ແລະໃນການໄປມາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໝາຍຄວາມວ່າ ພົນລະເມືອງລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະຊາວຕ່າງປະເທດ ທຸກຄົນມີສິດຕັ້ງບ້ານເຮືອນໄດ້ຕາມໃຈຊອບຢູ່ໃນທົ່ວປະເທດ ໂດຍຖືກຕ້ອງຕາມລະບຽບກົດໝາຍ ແລະໄດ້ຮັບການອະນຸຍາດຈາກອົງການປົກຄອງທ້ອງຖິ່ນ ທັງຕ້ອງປະຕິບັດຕາມແຜນຈັດສັນ ກ່ຽວກັບທີ່ຕັ້ງພູມລຳເນົາ, ການແບ່ງດິນ, ແບ່ງປ່າ, ທີ່ທຳມາຫາກິນ ເຊັ່ນ: ແຜນສ້າງບ້ານ ແລະກຸ່ມບ້ານພັດທະນາ.

ພົນລະເມືອງລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະຊາວຕ່າງປະເທດທຸກຄົນມີສິດເສລີພາບໃນການເຄື່ອນໄຫວໄປມາໂດຍສອດຄ່ອງກັບລະບຽບກົດໝາຍ, ບໍ່ສ້າງຜົນກະທົບຕໍ່ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ, ບໍ່ກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງບຸກຄົນ ແລະການຈັດຕັ້ງອື່ນ.

III. ຄວາມເສຍຫາຍທີ່ມີມູນຄ່າຕ່ຳກວ່າ 500.000 ກີບ ບໍ່ຖືວ່າເປັນການກະທຳຜິດທາງອາຍາ

ອີງຕາມມາດຕາ 6 ຂອງກົດໝາຍອາຍາ ວັກ 2 ທຸກການກະທຳ ຫຼື ການເມີນເສີຍ ທີ່ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ແຕ່ໄດ້ກໍ່ຄວາມເສຍຫາຍຕ່ຳກວ່າ 500.000 ກີບ ຈະບໍ່ຖືວ່າເປັນການກະທຳຜິດທາງອາຍາ ຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫລາບ ຫຼື ເປັນອາຈິນ.

ການທີ່ກຳນົດວ່າການກະທຳທີ່ກໍ່ຄວາມເສຍຫາຍບໍ່ເຖິງ 500.000 ກີບ ບໍ່ຖືວ່າເປັນການກະຜິດທາງອາຍານັ້ນກໍຍ້ອນວ່າອີງຕາມສະພາບເສດຖະກິດໃນປັດຈຸບັນເຫັນວ່າ 500.000 ກີບ ເປັນມູນຄ່າບໍ່ຫຼວງຫຼາຍ ສິ່ງຕ້ອງຫັນໄປແກ້ໄຂທາງດ້ານບໍລິຫານຢູ່ຮາກຖານ ເຊັ່ນ: ການທຳລາຍຊັບຂອງພົນລະເມືອງ, ການລັກຊັບຂອງພົນລະເມືອງ, ການລະເມີດກົດຈາລະຈອນ ທີ່ພາໃຫ້ເກີດອຸບະຕິເຫດ ຊຶ່ງກໍ່ຄວາມເສຍຫາຍໜ້ອຍ.

ມູນຄ່າ 500.000 ກີບ ນີ້ ແມ່ນນຳໃຊ້ສຳລັບຄວາມເສຍຫາຍທາງດ້ານວັດຖຸເທົ່ານັ້ນ. ສ່ວນຄວາມເສຍຫາຍທາງດ້ານສຸຂະພາບ, ຈິດໃຈ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມນັ້ນ ແມ່ນໃຫ້ປະຕິບັດຕາມມາດຕາຂອງກົດໝາຍທີ່ກ່ຽວຂ້ອງ.

ຕໍ່ການກະທຳທີ່ໄດ້ກຳນົດໄວ້ໃນວັກ 2 ຂອງມາດຕາ 6 ແມ່ນໃຫ້ທຳການໄກ່ເກ່ຍຢູ່ຂັ້ນ ບ້ານຕາມລະບຽບການ.

ມາດຕາ 6 ວັກ 2 ນີ້ຈະບໍ່ນຳໃຊ້ສຳລັບການກະທຳຜິດໃນສະຖານໂທສານຸໂທດ ທີ່ເປັນອັນຕະລາຍ ຫຼື ການກະທຳຜິດໃນສະຖານຄະລຸໂທດ ເຊັ່ນ: ການຊິງຊັບ, ການປຸ້ນຊັບ.

IV. ການທຳມິດສະຈານ

ອີງຕາມມາດຕາ 126 ຂອງກົດໝາຍອາຍາ ບຸກຄົນຜູ້ໃດທີ່ມີເມຍ ຫຼື ຜົວຫາກໄດ້ເສບສົມກັບຜູ້ອື່ນຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະຈະຖືກປັບໃໝແຕ່ 500.000 ກີບ ຫາ 5.000.000 ກີບ.

ຄູ່ທຳມິດສະຈານ ກໍຈະຖືກລົງໂທດໃນສະຖານດຽວກັນ.

ຄຳວ່າ ເສບສົມ ໝາຍເຖິງການກະທຳໃດໜຶ່ງດັ່ງນີ້:

1. ມີການຮ່ວມເພດ;
2. ມີຄວາມຮັກມັກແບບຊູ້ສາວຢູ່ຫ້ອງນອນ, ຫ້ອງເຮືອນພັກ, ຫ້ອງໂຮງແຮມ, ຫ້ອງສ່ວນຕົວອື່ນໆ ຫຼື ຢູ່ສະຖານທີ່ປິດລັບນຳກັນ.

V. ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ

ອີງຕາມມາດຕາ 99 ຂໍ້ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະມາດຕາ 113 ຂໍ້ 3 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ

ຄຳວ່າ ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດແລ້ວພິພາກສາໃໝ່ມີຄວາມໝາຍດັ່ງນີ້:

1. ພິພາກສາໃໝ່ ແມ່ນພິພາກສາທາງດ້ານກົດໝາຍ ພາຍຫລັງທີ່ໄດ້ກວດກາຄຳຕັດສິນຂອງສານຂັ້ນລຸ່ມແລ້ວ ເຫັນວ່າມີການລະເມີດລະບຽບການດຳເນີນຄະດີ ຫລືການນຳໃຊ້ມາດຕາຂອງກົດໝາຍບໍ່ຖືກຕ້ອງນັ້ນ ສານລົບລ້າງຈະພິພາກສາໃໝ່ທາງດ້ານກົດໝາຍ ໂດຍບໍ່ລົງເລິກເຖິງເນື້ອຄະດີ ແລ້ວສົ່ງໃຫ້ສານຂັ້ນລຸ່ມຕັດສິນຄືນໃໝ່;

2. ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນຫລືທັງໝົດແລ້ວພິພາກສາໃໝ່ ໝາຍຄວາມວ່າ ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນ ທີ່ບໍ່ຖືກຕອ້ງຕາມກົດໝາຍ ຫລື ລົບລ້າງຄຳພິພາກສາຂອງສານຂັ້ນອຸທອນທີ່ຕັດສິນເກີນ ກວ່າຄູ່ຄວາມໄດ້ຮອ້ງຂໍຫລືເກີນກ່ວາທີ່ກົດໝາຍໄດ້ກຳນົດໄວ້ ໂດຍບໍ່ສົ່ງຄືນໃຫ້ສານຂັ້ນອຸທອນຕັດສິນຄືນໃໝ່ ທັງນີ້ເພື່ອໃຫ້ການດຳເນີນຄະດີມີຄວາມວ່ອງໄວ.

## VI. <u>ການປະຕິບັດພາງ</u>

ອີງຕາມມາດຕາ 94 ວັກ 2 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ຄຳຕັດສິນຂອງສານ ໃນກໍລະນີຮີບດ່ວນ.... ຕ້ອງສົ່ງໄປຍັງຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນຂອງສານ ເພື່ອຈັດຕັ້ງປະຕິບັດເຖິງວ່າຈະມີການຂໍອຸທອນກໍຕາມ ໝາຍຄວາມວ່າ ໃຫ້ສານຂັ້ນຕົ້ນ ແລະສານຂັ້ນອຸທອນມີສິດລົງຄຳຕັດສິນໃຫ້ປະຕິບັດພາງໄດ້ເຖິງວ່າຈະມີການຂໍອຸທອນ ຫຼື ຂໍລົບລ້າງກໍຕາມ.

## VII. <u>ທີ່ດິນຂອງຜູ້ທີ່ປະໜີໄປຕ່າງປະເທດ</u>

ອີງຕາມມາດຕາ 76 ຂອງກົດໝາຍວ່າດ້ວຍທີ່ດິນ ລັດບໍ່ຮັບຮູ້ການທວງເອົາຄືນ ທີ່ດິນຂອງຜູ້ທີ່ໄດ້ປະໜີໄປຕ່າງປະເທດ.

ຄຳວ່າ ປະໜີໄປຕ່າງປະເທດ ໝາຍຄວາມວ່າ ຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ຊຶ່ງເປັນພົນລະເມືອງລາວ, ຊາວຕ່າງດ້າວ ແລະຜູ້ບໍ່ມີສັນຊາດ ຊຶ່ງໄປຢູ່ຕ່າງປະເທດເກີນເຈັດປີ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ໄປຢູ່ຕ່າງປະເທດ ໂດຍໄດ້ຮັບອະນຸຍາດ ແຕ່ຫາກເກີນກຳນົດ ແລະບໍ່ໄດ້ຢູ່ໃນການຄຸ້ມຄອງຂອງສະຖານທູດ ຫຼື ກົງສູນລາວປະຈຳຢູ່ປະເທດນັ້ນ ແລະຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ ເກີນສິບປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍວ່າດ້ວຍ ສັນຊາດລາວ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ